# ກອນແຫຼ່ ສັນຍາສາມປີ

| | |
|---|---|
| ສັນຍາຄັ້ງໜຶ່ງ | ຍັງຝັງຕຣຶງຊຶ້ງໃນໃຈ |
| ສາມປີຈົບຮຽນອອກໄປ | ສອງເຮົາຈະໄດ້ໝາຍໝັ້ນ |
| ແຕ່ແລ້ວຫົວໃຈ | ຂອງຜູ້ຊາຍກໍມາເຫຫັນ |
| ປ່ອຍນ້ອງເສົ້າຈາບັນ | ປ່ຽນແປຜັນສັນຍາສາມປີ........ |

| | |
|---|---|
| **ແສນເສົ້າໂສກສັນ | ທົບທວນອະດີດ |
| ຄິດເຖິງເພື່ອນມິດ | ຝັງຈິດນິວາຍ |
| ຈາກມາແສນນານ | ລຳພັນບໍ່ຫາຍ |
| ຄວາມຫຼັງຝັງໃຈ | ຫ່ວງໄຍສຸດຊຶ້ງ |
| ກ່ອນພາກຈາກັນ | ໂສກສັນລຳພຶງ |
| ທ້າຍປີທີໜຶ່ງ | ເຮົາໃຫ້ສັນຍາ |
| ວ່າຈະຮັກກັນ | ຍຶດໝັ້ນວາຈາ |
| ກ່ອນຈາກອຳລາ | ສັນຍາສາມປີ |

| | |
|---|---|
| **ສິ້ນສຶກສຶກສາ | ສັ່ງລາຈາກກັນ |
| ແສນເສົ້າຈາບັນ | ໂສກສັນໂສກີ |
| ກ່ອນຈະອຳລາ | ສັນຍາສາມປີ |
| ຈົດຈຳໃຫ້ດີ | ຍາມໜີໄກກັນ |
| ຈົບຮຽນເມື່ອໃດ | ຜູ້ໃຫຍ່ໝາຍໝັ້ນ |
| ສັດຊື່ຕໍ່ກັນ | ຢ່າຜັນປ່ຽນໃຈ |
| ຄົບຫຼັກສູດຄຣູ | ສີ່ປີເມື່ອໃດ |
| ສອງເຮົາຈະໄດ້ | ສົມໃຈສົມປອງ |

| | |
|---|---|
| **ໃນປີທີສອງ | ຄອງຮັກກັນຢູ່ |

| | |
|---|---|
| ບ່າວສາວຮຽນຄຣູ | ຮູ້ກັນເຖິງຖອງ |
| ບໍ່ເຄີຍລ່ວງເກີນ | ປະເພນີຮີດຮອງ |
| ເພື່ອຄວາມຖືກຕ້ອງ | ກົດເກນໂຮງຮຽນ |
| ມຸ້ງໝັ້ນມານະ | ສຶກສາພາກພຽນ |
| ຮ່ວມຮັກຮ່ວມຮຽນ | ສຸດຊຶ້ງຕຣິງໃຈ |
| ຜູ້ໃຫຍ່ຍິນດີ | ທີ່ນ້ອງແລະອ້າຍ |
| ຄູ່ຄຽງກັນໄປ | ປະຄັບປະຄອງ |
| | |
| ** ຢູ່ປີທີສາມ | ທຸກຄົນທຳໃຈ ເອີ່.... ເອີ້...... ເອີ..... ເອີຍ... |
| ຢູ່ປີທີສາມ | ທຸກຄົນທຳໃຈ |
| ທຸກຢ່າງປ່ຽນໄປ | ສມັຍປົກຄອງ |
| ບ້ານເມືອງສັບສົນ | ກັງວົນເສົ້າໝອງ |
| ຣະບອບປົກຄອງ | ໃນອິນດີຈີນ |
| ກະດຸ້ງກະເດື່ອງ | ຝືດເຄືອງຫາກິນ |
| ການເມືອງພິກປີ້ນ | ແຜ່ນດິນຮ້ອນຮົນ |
| ທີສອງທັນວາ | ເຈັດທ້າວຸ້ນວົນ |
| ນັກຮຽນຫຼາຍຄົນ | ຕ້ອງໂຕນຂ້າມໄທ |
| | |
| **ເຖິງຣະບອບການ | ບ້ານເມືອງຈະປ່ຽນ |
| ເຣື່ອງຮັກເຣື່ອງຮຽນ | ກໍຍັງໝັ້ນໝາຍ |
| ສັນຍາຝັງແໜ້ນ | ບໍ່ຄອນແຄນໃຈ |
| ເຫຼືອອີກປີປາຍ | ຈະໄດ້ສົມຫວັງ |
| ສອງເຮົາໝັ້ນໝາຍ | ຈິງໃຈຮ່ວມທາງ |
| ແຕ່ຄອຍຣະວັງ | ຢ້ານຜິດກົດເກນ |
| ມີການສ້ຶງຊອມ | ບໍ່ຍອມໃຫ້ເຫັນ |
| ບໍ່ຢາກກາຍເປັນ | ເປົ້າໝາຍຫຼາຍຄົນ |

| | |
|---|---|
| **ຕົກມາປີສີ່ | ຍິນດີຮຽນຕໍ່ |
| ບ້ານເມືອງເຮົາຫນໍ | ຊຸ້ມຊ້ຽວສັບສົນ |
| ຝູງຊົນອຶດຢາກ | ທຸກຍາກເຫຼືອທົນ |
| ຫຼາຍຮ້ອຍພັນປີ | ເຕັ້ນ ໂຕນຫນີຕາຍ |
| ເພື່ອນຝູງນັກຮຽນ | ຫຼາຍຄົນຫນີໄກ |
| ລອຍຂ້າມຝັ່ງ ໄທ | ບໍ່ ໄດ້ສັ່ງລາ |
| ແຕ່ສອງເຮົາຍັງ | ມຸ້ງຫນ້າຕັ້ງຕາ |
| ຈົບການສຶກສາ | ໄດ້ດັ່ງປະສົງ |
| | |
| **ສູ້ທົນພາກພຽນ | ຮ່ຳຮຽນຈົນຈົບ |
| ຫຼັກສູຕຄຣູຄົບ | ສີ່ປີຫມັ້ນຄົງ |
| ຄຳສັ່ງອອກສອນ | ບ້ານປ່າແດນດົງ |
| ສອງເຮົາຖືກສົ່ງ | ໄປຄົນລະແດນ |
| ກັມເວນຂອງເຮົາ | ຫງອຍເສົ້າສຸດແສນ |
| ເປັນຫ່ວງແຕ່ແຟນ | ຢ້ານລືມສັນຍາ |
| ຕ້ອງໄກ ໄລຫນີ | ສາມປີສັນຍາ |
| ຫນ້າທີ່ນຳພາ | ຫ່າງລາກັນໄປ |
| | |
| ** ນ້ຳຕາລົນຫຼັ່ງ | ຄຳສັ່ງມາເຖິງ ໂອ່.... ໂອ້.... ໂອ.... ໂອຍ... |
| ນ້ຳຕາລົນຫຼັ່ງ | ຄຳສັ່ງມາເຖິງ |
| ກົດເກນຂັ້ນເທິງ | ສັ່ງມາຕ້ອງໄປ |
| ແສນເສົ້າ ໂສກ | ນາທີສຸດທ້າຍ |
| ກ່ອນພາກຈາກໄກ | ຢ້ຳເຕືອນສັນຍາ |
| ຢ່າປ່ຽນເປັນອື່ນ | ກ້ຳກືນນ້ຳຕາ |
| ຈະບໍ່ລືມລາ | ສັນຍາສາມປີ |
| ດ້ວຍຄວາມຈຳເປັນ | ເຫມືອນກັມເວນມີ |
| ແສນເສົ້າ ໂສກ | ໃນວິຖີຊີວິດ |

| | |
|---|---|
| **ບໍ່ພໍເທົ່າໃດ | ກໍໄດ້ຍິນຂ່າວ |
| ເລົ່າລືອື້ສາວ | ເຮື່ອງຮາວສິ້ນຄິດ |
| ເຫຼັ້ນສາວມີທ້ອງ | ອ້າຍຕ້ອງຮັບຜິດ |
| ເຫມືອນກິນຢາພິດ | ອ້າຍຜິດສັນຍາ |
| ນັ່ງນ້ຳຕາຊຶມ | ຄືນລືມວາຈາ |
| ເສັຽແຮງລໍຖ້າ | ເຂົາມາປ່ຽນໃຈ |
| ທຸກສິ່ງທີ່ຫວັງ | ຕ້ອງພັງສລາຍ |
| ເຂົາຊ່າງທຳລາຍ | ໃຫ້ເຮົາໂສກີ |

| | |
|---|---|
| **ຈົບແລ້ວຈົບກັນ | ສັນຍາເຄີຍກ່າວ |
| ທາງສອງຮັກເຮົາ | ສິ້ນສຸດເທົ່ານີ້ |
| ເສັຽແຮງຕັ້ງຕາ | ສັນຍາສາມປີ |
| ຕຣົມຕຣອມຣີດີ | ຫນີຂ້າມຝັ່ງໄທ |
| ເຫມືອນຕາຍຈາກກັນ | ຄວາມຝັນສລາຍ |
| ທຸກສິ່ງຄາດຫມາຍ | ວາງໄວ້ຈາບັນ |
| ເຂົາມາທຳລາຍ | ລືມໄວເຫຫັນ |
| ຈົບແລ້ວສິ້ນກັນ | ສັນຍາສາມປີ ເອີ....... |